ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຄະນະກຳມະການຄຸ້ມຄອງແຫ່ງຊາດ
ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ
ທີ່ຕົກຄ້າງຢູ່ ສປປ ລາວ

ເລກທີ: 255 /ຄຊກລ.ຫກ
ນະຄອນຫຼວງວຽງຈັນ, ວັນທີ: 07 AUG 2018

**ບົດບັນທຶກກອງປະຊຸມ**
**ປຶກສາຫາລືກ່ຽວກັບການປະສານງານຂໍອະນຸມັດ ແລະ ການຈັດຕັ້ງປະຕິບັດ**
**ໂຄງການກັບສາກົນໃນວຽກງານແກ້ໄຂບັນຫາ ລບຕ.**

I. ກອງປະຊຸມປຶກສາຫາລືກ່ຽວກັບການປະສານງານຂໍອະນຸມັດ ແລະ ການຈັດຕັ້ງປະຕິບັດ ໂຄງການກັບສາກົນໃນວຽກງານແກ້ໄຂ ລບຕ ໄດ້ຈັດຂຶ້ນໃນເວລາ 13:30 ຂອງວັນທີ 26 ກໍລະກົດ 2018 ທີ່ຫ້ອງການ ຄຊກລ. ກອງປະຊຸມດຳເນີນໂດຍການເປັນປະທານຂອງທ່ານ ພູຂຽວ ຈັນທະສົມບູນ ຫົວໜ້າຫ້ອງການ ຄຊກລ ແລະ ຜູ້ເຂົ້າຮ່ວມຈາກກົມກ່ຽວຂ້ອງກະຊວງການຕ່າງປະເທດ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຫົວໜ້າ ແລະ ຜູ້ປະສານງານໂຄງການຂອງບັນດາອົງການປະຕິບັດງານແກ້ໄຂບັນຫາລະເບີດບໍ່ທັນແຕກຢູ່ ສປປ ລາວ. ນອກນີ້, ກໍ່ຍັງມີຕາງໜ້າບັນດາປະເທດຜູ້ໃຫ້ທຶນຈຳນວນໜຶ່ງເຂົ້າຮ່ວມເຊັ່ນ: ສະຖານທູດ ສ.ອາເມລິກາ ປະຈຳ ສປປ ລາວ ແລະ ອົງການ ສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ (ມີລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມໄດ້ແນບມາພ້ອມນີ້).

II. **ຫົວຂໍ້ທີ່ໄດ້ປຶກສາໃນກອງປະຊຸມ.**

ກ່ອນການເປີດປະຊຸມຄັ້ງນີ້ແມ່ນຫ້ອງການ ຄຊກລ ໄດ້ຮັບການສະເໜີຫົວຂໍ້ໃນສົນທະນາຈາກບັນດາອົງການປະຕິບັດງານແກ້ໄຂ ລບຕ, ຊຶ່ງຫ້ອງການ ຄຊກລ ໄດ້ ຮວບຮວມ ແລະ ສັງລວມໄດ້ດັ່ງນີ້:

1. ໄລຍະເວລາການຄົ້ນຄວ້າເອກະສານໂຄງການ.
2. ຂະບວນການຂໍອະນຸມັດບາງກິດຈະກຳ ກ່ອນອະນຸມັດໂຄງການ.
3. ລາຍການເອກະສານຊ້ອນທ້າຍໃສ່ເອກະສານໂຄງການ.
4. ຂະບວນການນຳເຂົ້າອຸປະກອນ ແລະ ພາຫະນະໂຄງການ.
5. ເອກະສານໂຄງການຂອງ ຄກລ ປີ 2019 ພາຍໃຕ້ການສະໜັບສະໜູນຂອງ ກະຊວງການຕ່າງປະ ເທດນ໋ອກແວ.
6. ວິທີຈັດຕັ້ງປະຕິບັດດ້ານຂະບວນການຈ່າຍເງິນຄືນ ສຳລັບຄ່າປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ.
7. ການລາຍງານໂຄງການ ແລະ ກິດຈະກຳ.
8. ເອກະສານໂຄງການ ໂດຍສະເພາະຮ່າງຮູບແບບງົບປະມານທີ່ເມືອງຕ້ອງການມີສ່ວນຮ່ວມໃນການຮັບຮອງ.
9. ພາລະບົດບາດຂອງຫ້ອງການ ຄຊກລ ແຂວງ ແລະ ພະແນກການຕ່າງປະເທດ.
10. ຫົວຂໍ້ການສົນທະນາອື່ນໆ.

ບ້ານສີສັງວອນ, ເມືອງໄຊເສດຖາ, ຕູ້ໄປສະນີ 7261, ນະຄອນຫຼວງວຽງຈັນ
ໂທ:(856-21)262386, ແຟັກ: (856-21)262396,ທີ່ຢູ່ອີເມວ : uxo.nra@gmail.com, ເວັບໄຊທ໌: www.nra.gov.la